# ຖະແຫຼງການຮ່ວມກອງປະຊຸມລັດຖະມົນຕີສາທາລະນະສຸກອາຊຽນບວກສາມ ຄັ້ງທີ 8 ຄັ້ງວັນທີ 30 ສິງຫາ 2019, ທີ່ສຽມຣຽບ, ຣາຊະອານາຈັກກຳປູເຈຍ.

1. ພວກເຮົາ, ລັດຖະມົນຕີກະຊວງສາທາລະນະສຸກ ຂອງບັນດາປະເທດສະມາຊິກແຫ່ງສະມາຄົມບັນດາປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ອາຊຽນ), ຕາງໜ້າໂດຍປະເທດບູຣໄນ ດາຣູສະລາມ, ຣາຊະອານາຈັກ ກຳປູເຈຍ, ສາທາລະນະລັດອິນໂດເນເຊຍ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ປະເທດມາເລເຊຍ, ສະຫະພາບມຽນມາ, ສາທາລະນະລັດ ຟີລິບປິນ, ສາທາລະນະລັດ ສິງກະໂປ, ຣາຊະອານາຈັກໄທ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ທ່ານລັດຖະມົນຕີສາທາລະນະສຸກ ແຫ່ງສາທາລະນະ ປະຊາຊົນ ຈີນ, ປະເທດຍີ່ປຸ່ນ ແລະ ສາທາລະນະລັດ ເກົາຫຼີ ໄດ້ຈັດກອງປະຊຸມລັດຖະມົນຕີສາທາລະນະສຸກອາຊຽນບວກສາມ ຄັ້ງທີ 8 ໃນວັນທີ 30 ສິງຫາ 2019, ທີ່ສຽມຣຽບ, ຣາຊະອານາຈັກກຳປູເຈຍ .
2. ພວກເຮົາຮັບຮູ້ວ່າ ການຮ່ວມມືຂອງພວກເຮົາດ້ານການພັດທະນາສາທາລະນະສຸກ ແມ່ນໄດ້ດຳເນີນຕາມແຜນພັດທະນາສາທາລະນະສຸກອາຊຽນ ຫຼັງປີ 2015 ໂດຍໄດ້ສຸມໃສ່ ບັນຫາສະເພາະ ທີ່ພົບເຫັນໄດ້ຫຼາຍ ກ່ຽວກັບ ການມີສຸຂະພາບທີ່ດີ ແລະ ຜູ້ສູງອາຍຸທີ່ແຂງແຮງ, ການສິ້ນສຸດທຸກຮູບແບບຂອງການຂາດສານອາຫານ, ການຕອບໂຕ້ຕໍ່ພະຍາດຕິດຕໍ່ ແລະ ໄພຄຸກຄາມສຸກເສີນທາງດ້ານສາທາລະນະສຸກ, ການຕ້ານຕໍ່ຢາຕ້ານເຊື້ອ ຂອງເຊື້ອຈຸລິນຊີ, ການປະກັນສຸຂະພາບທຸກຖ້ວນໜ້າ, ບຸກຄະລາກອນສາທາລະນະສຸກ, ຢາຫຼວງ ແລະ ຢາພື້ນເມືອງ, ວຽກງານສຸຂະພາບແມ່ ແລະ ເດັກ, ການຕອບໂຕ້ຢ່າງໄວວາໃນບັນຫາ ແລະ ຄວາມປອດໄພຂອງອາຫານ ແລະ ວິກິດການ, ການກວດສອບ ແລະ ຮັບປະກັນດ້ານແຜນການຮອງຮັບດ້ານຄວາມປອດໄພຂອງອາຫານ ແລະ ການສ້າງຂີດຄວາມສາມາດໃນການຊອກຫາກໍລະນີເກີດມີການລະບາດຂອງພະຍາດທີ່ເກີດຈາກອາຫານ.
3. ພວກເຮົາມີຄວາມມຸ່ງໝັ້ນ ທີ່ຈະສືບຕໍ່ຄວາມພະຍາຍາມ ໃນການຈັດຕັ້ງປະຕິບັດກົດລະບຽບສາກົນສາທາລະນະສຸກ (IHR), ແຜນຍຸດທະສາດ ສຳລັບພະຍາດຊຶມເຊື້ອທີ່ເກີດຂຶ້ນໃໝ່ ແລະ ເຫດສຸກເສີນທາງສາທາລະນະສຸກ ຂອງຂົງເຂດອາຊີປາຊີຟິກ (APSEDIII) ເພື່ອສົ່ງເສີມຄວາມສາມາດໃນການປ້ອງກັນ, ຊອກຫາ ແລະ ຕອບໂຕ້ຕໍ່ໄພຄຸກຄາມສາທາລະນະສຸກ ຂອງບັນດາປະເທດສະມາຊິກອາຊຽນ ແລະ ປະເທດບວກສາມ. ໃນການສະໜັບສະໜູນຄວາມກ້າວໜ້າທີ່ເກີດຂຶ້ນ, ແມ່ນມີຄວາມຕ້ອງການເພີ່ມເຕີມ ໃນການສ້າງຄວາມເຂັ້ມແຂງໃນດ້ານ: (1) ການຕ້ານຕໍ່ຢາຕ້ານເຊື້ອ ຂອງເຊື້ອຈຸລິນຊີ, ການຄວບຄຸມຄວາມປອດໄພຂອງອາຫານ ແລະ ພະຍາດທີ່ຕິດຕໍ່ຈາກສັດສູ່ຄົນ, (2) ການສື່ສານລະຫວ່າງຂະແໜງການ ແລະ ການແບ່ງປັນຂໍ້ມູນ ລວມມີການແບ່ງປັນຂໍ້ມູນບົດລາຍງານການສອບສວນກໍລະນີເກີດການລະບາດລະຫວ່າງ ຄົນ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ແລະ (3) ກົນໄກລະຫວ່າງຂະແໜງການທີ່ມີຢູ່ແລ້ວ ເຊິ່ງລວມເຖິງຄູ່ຮ່ວມພັດທະນາຕ່າງໆ ເພື່ອຄວບຄຸມການພັດທະນາຂີດຄວາມສາມາດຫຼັກ ຂອງກົດລະບຽບສາກົນສາທາ ລະນະສຸກ ພາຍໃນປະເທດສະມາຊິກອາຊຽນ ແລະ ປະເທດບວກສາມ.
4. ພວກເຮົາຕົກລົງ ທີ່ຈະເສີມສ້າງຄວາມຄວາມພະຍາຍາມຮ່ວມກັນ ໃນການສະໜັບສະໜູນ, ອຳນວຍຄວາມສະດວກ ແລະ ດຳເນີນການປະຕິບັດທາງສັງຄົມ ແລະ ເສດຖະກິດ ເພື່ອແກ້ໄຂບັນຫາພະຍາດບໍ່ຕິດຕໍ່ ແລະ ບັນດາປັດໃຈສ່ຽງອື່ນໆ ລວມມີການຊົມໃຊ້ຢາສູບ ແລະ ຜົນຮ້າຍຂອງການນຳໃຊ້ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ການບໍລິໂພກອາຫານທີ່ບໍ່ຖືກຫຼັກໂພຊະນາການ ຕະຫຼອດເຖິງ ການດຳລົງຊີວິດ ທີ່ບໍ່ມີກິດຈະກຳທາງກາຍ.

5. ພວກເຮົາຢືນຢັນວ່າສຸຂະພາບປະຊາຊົນຂອງພວກເຮົາ ແມ່ນມີຄວາມສຳຄັນຫຼາຍທີ່ສຸດ ໂດຍບໍ່ໄດ້ຄຳນຶງເຖິງທີ່ຕັ້ງພູມສັນຖານ, ແນວຄິດການເມືອງ ແລະ ສະຖານະທາງເສດຖະກິດ. ພວກເຮົາຍຶດໝັ້ນຕໍ່ເປົ້າໝາຍການພັດທະນາແບບຍືນຍົງຂອງສະຫະປະຊາຊາດ ເພື່ອບັນລຸການປະກັນສຸຂະພາບທຸກຖ້ວນໜ້າ ພາຍໃນປີ 2030 ເຊິ່ງປະກອບມີ ການປ້ອງກັນຄວາມສ່ຽງທາງການເງິນ, ການເຂົ້າເຖິງການບໍລິການສຸຂະພາບທີ່ຈຳເປັນທີ່ມີຄຸນນະພາບ ແລະ ການເຂົ້າເຖິງຢາປົວພະຍາດ ແລະ ວັກຊີນຈຳເປັນ ທີ່ມີຄວາມປອດໄພ, ມີປະສິດຕິຜົນ ແລະ ລາຄາຍ່ອມເຍົາ ສຳລັບທຸກໆຄົນ. ສະນັ້ນ, ພວກເຮົາຈຶ່ງມອບໃຫ້ຄະນະເຈົ້າໜ້າທີ່ອາວຸໂສດ້ານການພັດທະນາສາທາລະນະສຸກອາຊຽນບວກ 3 ຊຸກຍູ້ຂະບວນການທີ່ກ້າວໄປສູ່ການປະກັນສຸຂະພາບທຸກຖ້ວນໜ້າ ໃນທຸກໆປະເທດ ໂດຍການສ້າງຂີດຄວາມສາມາດໃນການປະເມີນ ແລະ ບໍລິຫານລະບົບສາທາລະນະສຸກແຫ່ງຊາດ ແລະ ພາກພື້ນ ທີ່ເທົ່າທຽມກັນ ແລະ ມີປະສິດທິຜົນ ລວມທັງການດຳເນີນກິດຈະກຳພາຍໃຕ້ເຄືອຂ່າຍການປະກັນສຸຂະພາບທຸກຖ້ວນໜ້າອາຊຽນບວກ 3.
6. ພວກເຮົາຮັບຮູ້ ບັນດາທ່າແຮງຂອງກິດຈະກຳດ້ານສຸຂະພາບ ທີ່ຢູ່ພາຍໃຕ້ກອບອາຊຽນບວກ 3 ແລະດ້ວຍເຫດນັ້ນ ຈຶ່ງໄດ້ຮຽກຮ້ອງໃຫ້ຄະນະເຈົ້າໜ້າທີ່ອາວຸໂສດ້ານການພັດທະນາສາທາລະນະສຸກອາຊຽນບວກ 3 ພິຈາລະນາຂໍ້ລິເລີ່ມຕ່າງໆ ທີ່ມີລັກສະນະພາກພື້ນ ເພື່ອປະກອບເຂົ້າໃສ່ໃນແຜນວຽກໃໝ່ທີ່ກ່ຽວຂ້ອງຂອງກຸ່ມສຸຂະພາບ.
7. ພວກເຮົາຮັບຮູ້ ການຊ່ວຍເຫຼືອທີ່ໄດ້ຮັບ ແລະ ຈະສືບຕໍ່ໃຫ້ຄຳໝັ້ນໃນການຮ່ວມມືຢ່າງໃກ້ຊິດ ກັບບັນດາຄູ່ຮ່ວມເຈລະຈາ ແລະ ບັນດາຄູ່ຮ່ວມພັດທະນາ ໂດຍຈະປະຕິບັດຕາມກົດລະບຽບຂະບວນການໃນການມີສ່ວນຮ່ວມຂອງໜ່ວຍງານຕ່າງໆຮ່ວມກັບຂະແໜງການສາທາລະນະສຸກອາຊຽນ.

ພວກເຮົາ ຫວັງວ່າຈະມີການແລກປ່ຽນຄຳຄິດເຫັນ ແລະ ການຮ່ວມມືໃນການພັດທະນາສາທາລະນະສຸກ ຢູ່ກອງປະຊຸມຄັ້ງຕໍ່ໄປທີ່ປະເທດອິນໂດເນເຊຍ ໃນປີ 2021.

.........................